ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ
ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ

1199
ເລກທີ:............./ອວຕຊ-ສນຍ
ນະຄອນຫລວງວຽງຈັນ, ວັນທີ: 22 JUN 2011

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເລກທີ 363/ນຍ ລົງວັນທີ 19 ສິງຫາ 2010 ວ່າດ້ວຍ ການແຈ້ງ ແລະ ການສອບຖາມຂໍ້ມູນທີ່ກ່ຽວຂ້ອງກັບການຄ້າ.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ສະບັບເລກທີ 444/ນຍ ລົງວັນທີ 24 ທັນວາ 2007.
- ອີງຕາມໜັງສືສະເໜີຂອງກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ສະບັບເລກທີ 150 ລົງວັນທີ 16 ມິຖຸນາ 2011.

**ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ**
**ຫົວໜ້າ ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອ ກຳນົດການສ້າງຕັ້ງ ຈຸດສອບຖາມກ່ຽວກັບສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ກຳນົດຂັ້ນຕອນດຳເນີນງານ ແລະ ອຳນາດສຳລັບ ການແລກປ່ຽນຂໍ້ມູນຂ່າວສານລະຫວ່າງຂະແໜງການທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຕອບຄຳຖາມທີ່ໄດ້ຮັບຈາກບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງ ປະເທດ ຢ່າງມີປະສິດທິຜົນ ແລະ ເພື່ອສະໜອງຂໍ້ມູນກ່ຽວກັບມາດຕະຖານ, ລະບຽບການເຕັກນິກ ແລະ ການປະເມີນຄວາມສອດຄ່ອງ.

ການເພີ່ມຄວາມໂປ່ງໃສ ແລະ ເຂົ້າເຖິງ ລະບຽບການ ຂໍ້ມູນຂ່າວສານດ້ານເຕັກນິກການເຄື່ອນໄຫວຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ທີ່ມີປະສິດທິຜົນ ຈະປັບປຸງໂຊງເຂດການດຳເນີນທຸລະກິດ ແລະ ຄວາມສາມາດໃນການແຂ່ງຂັນ ຢູ່ໃນເສດຖະ ກິດຂອງ ສປປ ລາວ ແລະ ຈະສົ່ງເສີມການສົ່ງອອກ ແລະ ການນຳເຂົ້າ. ຂໍ້ຕົກລົງສະບັບນີ້ຍັງຈະ ຮັບປະກັນວ່າ ສປປ ລາວ ປະຕິບັດຕາມສັນຍາ ແລະ ສິນທິສັນຍາສາກົນ, ໂດຍສະເພາະເງື່ອນໄຂຂອງຂໍ້ຕົກລົງ ຂອງອົງການການຄ້າໂລກກ່ຽວກັບສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ.

**ມາດຕາ 2. ການອະທິບາຍຄຳສັບ**

**ມາດຕະຖານ** ໝາຍເຖິງເອກະສານທີ່ຖືກຮັບຮອງໂດຍອົງການທີ່ຖືກຍອມຮັບ ຊຶ່ງກຳນົດສຳລັບການນຳໃຊ້ທົ່ວໄປ ແລະ ນຳໃຊ້ແບບຊ້ຳກັນຫລາຍຄັ້ງ ລະບຽບ, ຄຳແນະນຳ ຫລື ຄຸນລັກສະນະສະເພາະຂອງຜະລິດຕະພັນ ຫລື ຂະບວນການທີ່ກ່ຽວຂ້ອງ ແລະ ກຳມະວິທີຊຶ່ງອາດລວມເອົາຄຳສັບ, ສັນຍາລັກ, ເງື່ອນໄຂດ້ານການຫຸ້ມຫໍ່, ກາໝາຍ ຫລື ສະຫລາກ ທີ່ນຳໃຊ້ກັບຜະລິດຕະພັນ, ຂະບວນການ ຫລື ກຳມະວິທີການຜະລິດ. ການປະຕິບັດຕາມມາດຕະຖານບໍ່ແມ່ນແບບບັງຄັບ.

**ລະບຽບການເຕັກນິກ** ແມ່ນເອກະສານທີ່ກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ ຫລື ຂະບວນການທີ່ກ່ຽວຂ້ອງ ແລະ ກຳມະວິທີການຜະລິດ ລວມທັງລະບຽບການບໍລິຫານຈັດການທີ່ສາມາດນຳໃຊ້ໄດ້ຊຶ່ງອາດລວມເອົາ ຄຳສັບ, ສັນຍາລັກ, ເງື່ອນໄຂດ້ານການຫຸ້ມຫໍ່, ກາໝາຍ ຫລື ສະຫລາກ ທີ່ນຳໃຊ້ກັບ ຜະລິດຕະພັນ, ຂະບວນການ ຫລື ກຳມະວິທີການຜະລິດ. ການປະຕິບັດຕາມລະບຽບການເຕັກນິກແມ່ນມາດຕະການບັງຄັບ.

**ການປະເມີນຄວາມສອດຄ່ອງ** ລວມເອົາການເຄື່ອນໄຫວທັງໝົດທີ່ກ່ຽວຂ້ອງກັບການກຳນົດໂດຍກົງ ຫລື ທາງອ້ອມທີ່ວ່າ ເງື່ອນໄຂທີ່ກ່ຽວຂ້ອງຢູ່ໃນ ມາດຕະຖານ ແລະ ລະບຽບການເຕັກນິກ ໄດ້ຮັບການຈັດຕັ້ງປະຕິບັດ.

**ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ** ໝາຍເຖິງ ອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າ. ນີ້ອາດຈະແມ່ນຜົນຂອງ (i) ລະບຽບການເຄັ່ງຄັດເກີນຄວາມຈຳເປັນ ເພື່ອບັນລຸເປົ້າໝາຍດ້ານນະໂຍບາຍ ຫລື (ii) ກຳລະນີທີ່ບໍ່ບັນລຸເປົ້າໝາຍອັນຊອບທຳ.

**ຈຸດສອບຖາມ** ແມ່ນໜ່ວຍງານໜຶ່ງ ທີ່ສ້າງຕັ້ງຂຶ້ນຢູ່ພາຍໃຕ້ອົງການວິທະຍາສາດ ແລະເຕັກໂນໂລຊີແຫ່ງຊາດ ເພື່ອຕອບຄຳຖາມ ແລະ ສະໜອງຂໍ້ມູນກ່ຽວກັບມາດ ຕະຖານ, ລະບຽບການເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງ ຕໍ່ບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ຄວາມໂປ່ງໃສ** ກຳນົດວ່າ ກົດໝາຍ. ລະບຽບການ ແລະ ການບໍລິຫານ ແລະ ຂະບວນການທີ່ຖືກສ້າງຂຶ້ນ ແລະ ຖືກປັບປຸງນັ້ນ ເປີດກວ້າງຕໍ່ສາທາລະນະຊົນທັງພາຍໃນ ແລະ ຕ່າງປະເທດ ແລະ ສາມາດຄາດຄະເນໄດ້.

## ໝວດທີ 2

## ທີ່ຕັ້ງ ແລະ ໂຄງປະກອບບຸກຄະລາກອນຂອງຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

### ມາດຕາ 3. ທີ່ຕັ້ງຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຕັ້ງຢູ່ ກົມຊັບສິນທາງປັນຍາ, ມາດຕະຖານ ແລະ ການວັດແທກ (ກຊມວ), ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ (ອວຕຊ).

### ມາດຕາ 4. ໂຄງປະກອບຂອງບຸກຄະລາກອນ

ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ປະກອບດ້ວຍບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດດ້ານພາສາອັງກິດ ແລະ ຄວາມຮູ້ດ້ານວິຊາການ ທີ່ຈຳເປັນຕໍ່ການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຈຸດສອບຖາມ. ຈຸດສອບຖາມຄວນມີ ຫົວໜ້າ ແລະ ພະນັກງານຊ່ວຍວຽກທີ່ພຽງພໍ.

## ໝວດທີ 3

## ສິດ ແລະ ໜ້າທີ່ຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

### ມາດຕາ 5. ສິດຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ມີສິດດັ່ງຕໍ່ໄປນີ້:

1) ປະສານສົມທົບກັບອົງການຈັດຕັ້ງຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນ ແລະ ເອກະສານ, ຮັບ ແລະ ຕອບຄຳຖາມ ຈາກພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບມາດຕະຖານແຫ່ງຊາດ, ທ້ອງຖິ່ນ, ລະບຽບການເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງ ທັງໝົດ;
2) ເຂົ້າຮ່ວມກອງປະຊຸມ, ການສຳມະນາ, ການຝຶກອົບຮົມ ແລະ ການໂຄສະນາເຜີຍແຜ່ທີ່ຕິດພັນກັບວຽກງານການສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ການເຄື່ອນໄຫວການແຈ້ງຂໍ້ມູນ;
3) ລາຍງານບັນຫາທີ່ກ່ຽວຂ້ອງກັບຈຸດສອບຖາມ ຕໍ່ຂັ້ນເທິງຂອງຕົນ;
4) ປະສານສົມທົບກັບໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ເພື່ອຄົ້ນຄວ້າຊອກຫາແຫລ່ງທຶນ ແລະ ການຊ່ວຍເຫລືອດ້ານວິຊາການ ຈາກປະເທດສະມາຊິກຂອງອົງການການຄ້າໂລກ ເພື່ອປັບປຸງການປະຕິບັດງານ ແລະ ການປະສານງານຂອງຕົນ;

**ມາດຕາ 6. ໜ້າທີ່ຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ**

ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ມີໜ້າທີ່ດັ່ງຕໍ່ໄປນີ້:

1) ຮັບ ແລະ ຕອບຄຳຖາມທັງໝົດ ຕາມກຳນົດເວລາທີ່ເໝາະສົມ ຈາກບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບບັນຫາດັ່ງລຸ່ມນີ້:

ກ. ລະບຽບການເຕັກນິກ, ມາດຕະຖານ ຫລື ຂັ້ນຕອນການປະເມີນຄວາມສອດຄ່ອງ ທີ່ຖືກສະເໜີຂໍການຮັບຮອງ ຫລື ນຳໃຊ້ຢູ່ ສປປ ລາວ;

ຂ. ການເປັນສະມາຊິກ ແລະ ການມີສ່ວນຮ່ວມຂອງ ສປປ ລາວ ຢູ່ໃນອົງການມາດຕະຖານ ໃນລະດັບສາກົນ, ພາກພື້ນ ແລະ ສອງຝ່າຍ, ລະບົບການປະເມີນຄວາມສອດຄ່ອງ, ສັນຍາການຮັບຮູ້ເຊິ່ງກັນ ແລະກັນ ແລະ ຂໍ້ມູນທີ່ສົມເຫດສົມຜົນກ່ຽວກັບ ລະບຽບການຂອງລະບົບດັ່ງກ່າວຂອງສາກົນ ແລະ ພາກພື້ນ ແລະ ຂໍ້ຕົກລົງທີ່ ສປປ ລາວ ເປັນປະເທດພາຄີ;

ຄ. ສະຖານທີ່ຕັ້ງ ແລະ ແຈ້ງການທີ່ຖືກພິມເຜີຍແຜ່ຕາມຂໍ້ຕົກລົງສະບັບນີ້ ຫລື ການໃຫ້ຂໍ້ມູນກ່ຽວກັບບ່ອນທີ່ສາມາດຂໍເອກະສານດັ່ງກ່າວນັ້ນໄດ້.

2) ປະສານສົມທົບກັບໜ່ວຍງານແຈ້ງຂໍ້ມູນດ້ານສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ, ຈຸດປະສານງານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ ຢ່າງມີປະສິດທິຜົນ ເພື່ອປະຕິບັດໜ້າທີ່ຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ເພື່ອສະໜັບສະໜູນໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ເພື່ອຕອບຮັບການແຈ້ງການຂອງອົງການການຄ້າໂລກ.

3) ສ້າງ ແລະ ບຳລຸງຮັກສາຖານຂໍ້ມູນກ່ຽວກັບນິຕິກຳ ແລະ ເອກະສານທີ່ກ່ຽວຂ້ອງທັງໝົດ ທີ່ກ່ຽວຂ້ອງກັບຂົງເຂດດັ່ງທີ່ໄດ້ລະບຸໄວ້ໃນຂໍ້ (1) ຂອງມາດຕານີ້ ຊຶ່ງນຳໃຊ້ເປັນຫ້ອງສະມຸດສຳລັບການຄົ້ນຄວ້າເອກະສານທຕິດພັນກັບສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ໂດຍການສະໜອງຂໍ້ມູນທີ່ມີການປັບປຸງໃຫ້ທັນກັບສະພາບການ, ຄົບຊຸດລວມຢູ່ຈຸດດຽວ ແລະ ສາມາດໃຫ້ສາທາລະນະຊົນ ມີສ່ວນຮ່ວມປະກອບຄຳຄິດຄຳເຫັນໃສ່ ຫລື ອັດສຳເນົາ ທັງໃນຮູບແບບ ເປັນສິ່ງພິມ ແລະແຟ້ມເອເລັກໂຕຼນິກ ແລະ ຢູ່ໃນເວັບໄຊ. ການສະໜອງເອກະສານ ສາມາດຄິດໄລ່ເກັບຄ່າບໍລິການຕາມຄວາມເໝາະສົມ ໂດຍອີງໃສ່ສະພາບຕົວຈິງຂອງເອກະສານດັ່ງກ່າວ.

ຖານຂໍ້ມູນ ຕ້ອງປະກອບມີດັ່ງຕໍ່ໄປນີ້:

1. ລາຍຊື່ຈຸດສອບຖາມຂອງບັນດາປະເທດສະມາຊິກ ອົງການການຄ້າໂລກ ທັງໝົດ;
2. ບັນດາມາດຕະຖານ, ລະບຽບການເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງທີ່ຖືກສະເໜີຂໍການຮັບຮອງ ແລະ ຖືກຈັດຕັ້ງປະຕິບັດ ທີ່ອອກໂດຍຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ; ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທັງໝົດ,

ທີ່ເປັນພາສາລາວ ແລະ ໃນກໍລະນີເໝາະສົມແບບຟອມ ການສະຫລຸບສັງລວມ ແລະ/ ຫລື ແບບຟອມລະອຽດທີ່ເປັນພາສາອັງກິດ;

3. ປື້ມຄູ່ມືກ່ຽວກັບມາດຕະຖານ ແລະ ການປະເມີນຄວາມສອດຄ່ອງ;
4. ໜັງສືພິມ, ວາລະສານກ່ຽວກັບມາດຕະຖານ ແລະ ບັນຫາທີ່ກ່ຽວຂ້ອງ;
5. ຂັ້ນຕອນການຢັ້ງຢືນ ແລະ ການຮັບຮອງຫ້ອງທົດລອງ;
6. ເອກະສານຂອງຄະນະກຳມະການສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ;
7. ໃບຄຳຮ້ອງ/ໃບສະເໜີຂໍຂໍ້ມູນ;
8. ການຕິດຕໍ່ພົວພັນຂອງຈຸດປະສານງານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ;
9. ການຕິດຕໍ່ຢູ່ພາຍໃນປະເທດ;
10. ບັນຊີຕິດຕາມການແຈກຢາຍເອກະສານຢູ່ພາຍໃນປະເທດ.

4) ພັດທະນາ ແລະບຳລັງຮັກສາເວັບໄຊຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ.

5) ສ້າງຄູ່ມືການປະຕິບັດໜ້າທີ່ທັງໝົດຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ຈຸດປະສານງານ ຊຶ່ງປະກອບດ້ວຍຂົງເຂດຕໍ່ໄປນີ້:

ກ. ລາຍລະອຽດກ່ຽວກັບການຈັດຕັ້ງ, ກິດຈະກຳ ແລະ ການເຄື່ອນໄຫວຂອງຈຸດສອບ ຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ຈຸດປະສານງານ;

ຂ. ຄູ່ມືແນະນຳການຈັດການ ແລະ ການສົ່ງຂໍ້ມູນໂດຍຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ຈຸດປະສານງານ;

ຄ. ການຮັບເອົາພະນັກງານ ແລະ ການຝຶກອົບຮົມໃຫ້ພະນັກງານ;

ງ. ການເກັບກຳ (ຮິບໂຮມເອົາ) ເອກະສານ ແລະ ເອກະສານອ້າງອີງອື່ນໆ;

ຈ. ຂັ້ນຕອນສຳລັບການຕອບຄຳຖາມ;

ສ. ການບຳລຸງຮັກສາ ແລະ ການປັບປຸງເວັບໄຊໃຫ້ທັນຍຸກສະໄໝ;

ຊ. ການຮ່ວມມືກັບອົງການຈັດຕັ້ງອື່ນໆ;

ຍ. ການກະກຽມເຜີຍແຜ່ກິດຈະກຳທີ່ມີຄວາມໂປ່ງໃສ;

ດ. ການບັນທຶກ ແລະ ການວິເຄາະໃບຄຳຮ້ອງຂໍເອກະສານ ແລະ ກຳນົດເວລາທີ່ຈຳເປັນສຳລັບດຳເນີນວຽກງານດັ່ງກ່າວ;

ຕ. ຂະບວນການຕິດຕາມ ແລະ ປະເມີນຜົນການດຳເນີນງານຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະຂໍ້ສະເໜີແນະກ່ຽວກັບວິທີການປັບປຸງ.

6) ໂຄສະນາເຜີຍແຜ່ ແລະ ສ້າງຈິດສຳນຶກໃຫ້ແກ່ສາທາລະນະຊົນ ໂດຍຜ່ານເວັບໄຊ ແລະ ສື່ມວນຊົນຂອງພາຍໃນ ແລະ ຕ່າງປະເທດກ່ຽວກັບແຫລ່ງຂໍ້ມູນທີ່ສາມາດນຳໃຊ້ໄດ້ຈາກຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ຊີ້ແຈງກ່ຽວກັບວິທີເອົາຂໍ້ມູນຈາກຈຸດສອບຖາມ, ຂໍ້ມູນກ່ຽວກັບການຕິດຕໍ່ ແລະຈຸດປະສົງ ແລະຜູ້ທີ່ຈະໄດ້ຮັບຜົນປະໂຫຍດ ຈາກຈຸດສອບຖາມ.

7) ກະກຽມບົດລາຍງານປະຈໍາປີກ່ຽວກັບກິດຈະກໍາຂອງຈຸດສອບຖາມສິ່ງເກີດຂວາງດ້ານເຕັກນິກຕໍ່ການຄ້າ ລວມທັງ ກິດຈະກໍາຂອງຈຸດປະສານງານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ໃຫ້ຂໍ້ສະເໜີແນະເພື່ອປັບປຸງການດໍາເນີນຄວາມຮັບຜິດຊອບຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ;

8) ຈັດກອງປະຊຸມຮ່ວມກັນລະຫວ່າງ ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ, ຈຸດປະສານງານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າແຫ່ງຊາດ ແລະ ໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງເກີດຂວາງດ້ານເຕັກນິກຕໍ່ການຄ້າ ປີລະຄັ້ງເພື່ອທົບທວນກິດຈະກໍາ ແລະ ໃຫ້ຂໍ້ສະເໜີແນະສໍາລັບປັບປຸງປະສິດທິພາບຂອງເຄືອຂ່າຍ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ.

9) ຈັດຕັ້ງປະຕິບັດກິດຈະກໍາຂອງຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າໃຫ້ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ແລະ ສັນຍາ ແລະ ສົນທິສັນຍາສາກົນທີ່ ສປປ ລາວເປັນພາຄີ, ໂດຍສະເພາະແມ່ນຂໍ້ຕົກລົງຂອງອົງການການຄ້າໂລກຕໍ່ກັບສິ່ງກີດຂວາງ ດ້ານເຕັກນິກຕໍ່ການຄ້າ.

## ໝວດທີ 4
## ການສ້າງຕັ້ງຈຸດປະສານງານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ

**ມາດຕາ 7. ຈຸດປະສານງານສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຢູ່ຂັ້ນສູນກາງແລະ ທ້ອງຖິ່ນ**

ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ມີໜ້າທີ່ຮັບຜິດຊອບສ້າງຕັ້ງຈຸດປະສານງານ ແລະ ແຕ່ງຕັ້ງພະນັກງານຂອງຕົນເພື່ອປະສານງານກັບ ຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ທີ່ກ່ຽວຂ້ອງກັບການກະກຽມ, ການຮັບ ແລະ ການຈັດຕັ້ງປະຕິບັດມາດຕະຖານ, ລະບຽບການເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງໃຫ້ທັນຕາມເວລາທີ່ກໍານົດຕາມທີ່ໄດ້ ກໍານົດໄວ້ໃນມາດຕາ 3 ຂອງດໍາລັດວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດ ພັນກັບການຄ້າ ສະບັບ ເລກທີ 363/ ນຍ, ລົງວັນທີ 19 ສິງຫາ 2010.

ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະທ້ອງຖິ່ນປະກອບມີດັ່ງລຸ່ມນີ້

1) ຂະແໜງການອຸດສາຫະກໍາ ແລະ ການຄ້າ;
2) ຂະແໜງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ;
3) ຂະແໜງການກະສິກໍາ ແລະ ປ່າໄມ້;
4) ຂະແໜງການພະລັງງານ ແລະ ບໍ່ແຮ່;
5) ຂະແໜງການໂຍທາທິການ ແລະ ຂົນສົ່ງ;

6) ຂະແໜງການໄປສະນີ ແລະໂທລະຄົມມະນາຄົມ;
7) ຂະແໜງການສາທາລະນະສຸກ;
8) ຂະແໜງການອື່ນໆທີ່ກ່ຽວຂ້ອງ ຕ້ອງຮັບຜິດຊອບຕໍ່ການຮ່ວມມືກັບຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ເພື່ອຕອບຄຳຖາມ ແລະສະໜອງເອກະສານ ແລະຂໍ້ມູນທີ່ກ່ຽວຂ້ອງ.

**ມາດຕາ 8. ສິດ ແລະ ໜ້າທີ່ຂອງ ຈຸດປະສານງານຂັ້ນສູນກາງ ແລະ ທ້ອງຖິ່ນ**

ສິດຂອງຈຸດປະສານງານ ມີດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາ, ການເຜີຍແຜ່ ແລະ ການຝຶກອົບຮົມທີ່ກ່ຽວຂ້ອງກັບວຽກງານການເຄື່ອນໄຫວຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ການແຈ້ງຂໍ້ມູນ;
2. ຄົ້ນຄວ້າຊອກຫາການຊ່ວຍເຫລືອດ້ານວິຊາການຈາກຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ, ແລະ ໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ເພື່ອປັບປຸງການເຄື່ອນໄຫວ ແລະ ການປະສານງານ;

ໜ້າທີ່ຂອງຈຸດປະສານງານມີດັ່ງນີ້:

1. ຕິດຕາມ ແລະ ລາຍງານກ່ຽວກັບການກະກຽມ, ການຮັບຮອງ ແລະ ການຈັດຕັ້ງປະຕິບັດມາດຕະຖານ, ລະບຽບການເຕັກນິກ ແລະຂັ້ນຕອນການ ປະເມີນຄວາມສອດຄ່ອງ ໃຫ້ແກ່ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຢູ່ພາຍໃນຂະແໜງການຂອງຕົນ ພາຍໃນເວລາ ທີ່ກຳນົດໄວ້.
2. ເມື່ອໄດ້ຮັບຄຳຖາມຈາກຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແລະ ຫລື ໜ່ວຍງານແຈ້ງຂໍ້ມູນສຸຂານາໄມ ແລະ ສຸຂານາໄມພືດ ແລະສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ, ຈຸດປະສານງານຕ້ອງສົ່ງຄຳຕອບ ແລະ ຂໍ້ມູນ ທີ່ກ່ຽວຂ້ອງພາຍໃນເວລາທີ່ກຳນົດ;
3. ຖ້າຄຳຖາມກ່ຽວກັບສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ຫາກຖືກຍື່ນໄປຫາຈຸດປະສານງານໂດຍກົງ, ຈຸດປະສານງານຈະສົ່ງຕໍ່ໄປໃຫ້ຈຸດສອບຖາມ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ເພື່ອດຳເນີນການອັນເໝາະສົມ.

## ໝວດທີ 5
### ງົບປະມານ ແລະ ກາປະທັບສໍາລັບຈຸດສອບຖາມ

**ມາດຕາ 9. ງົບປະມານ**

ງົບປະມານຂອງຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ແມ່ນນໍາໃຊ້ງົບປະມານຂອງກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ, ອົງການວິ ທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ.

**ມາດຕາ 10. ກາປະທັບ**

ໃຫ້ຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ ນໍາໃຊ້ກາປະທັບຂອງກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ, ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ.

## ໝວດທີ 6
### ບົດບັນຍັດສຸດທ້າຍ

**ມາດຕາ 11. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ເປັນຈຸດໃຈກາງປະສານງານກັບຂະແໜງການທີ່ກ່ຽວຂ້ອງໃນການ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງມີປະສິດທິຜົນ.

**ມາດຕາ 12. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫລັງສາມສິບວັນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຫລັງຈາກການພິມເຜີຍແຜ່ໃນວາລະສານທາງການ. ທຸກຂໍ້ຕົກລົງ ແລະ ລະບຽບການອື່ນໆ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ທາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ .

ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ
ຫົວໜ້າອົງການ ວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ

ສ.ຈ.ດຣ ບຸນຍຽມ ພົດສະໄໝ